**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

**ຄະນະປະຈໍາ**

ເລກທີ 299 / **ຄປຈ**

ນະຄອນຫຼວງວຽງຈັນ, ວັນທີ 20 / 10 / 25

# ມະຕິ

## ຂອງຄະນະປະຈໍາສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາລັດຖະບັນຍັດວ່າດ້ວຍເຂດຍຸດທະສາດປ້ອງກັນຊາດ

- ອີງຕາມມາດຕາ 68 ຂອງລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມມາດຕາ 66 ແລະ ມາດຕາ 68 ຂອງກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຮັບຮອງຮ່າງລັດຖະບັນຍັດວ່າດ້ວຍເຂດຍຸດທະສາດປ້ອງກັນຊາດ ສະບັບເລກທີ 74/ລບ, ລົງວັນທີ 2 ມິຖຸນາ 2025;
- ອີງຕາມຜົນກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຄັ້ງວັນທີ 28 ສິງຫາ 2025.

**ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ເຫັນດີຮັບຮອງເອົາເນື້ອໃນລັດຖະບັນຍັດວ່າດ້ວຍເຂດຍຸດທະສາດປ້ອງກັນຊາດ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຄະນະປະຈໍາສະພາແຫ່ງຊາດ
ປະທານ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 001 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 1 ກໍລະກົດ 2026

# ລັດຖະບັນຍັດ

## ວ່າດ້ວຍເຂດຍຸດທະສາດປ້ອງກັນຊາດ

- ອີງຕາມ ມາດຕາ 68 ຂໍ້ 2 ຂອງລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນຊາດ ສະບັບເລກທີ 67/ສພຊ, ລົງວັນທີ 11 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິ ຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 299/ຄປຈ, ລົງວັນທີ 20 ຕຸລາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 49/ຄປຈ, ລົງວັນທີ 20 ຕຸລາ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານເຂດຍຸດທະສາດປ້ອງກັນຊາດ ເພື່ອເຮັດໃຫ້ເຂດດັ່ງກ່າວ ໄດ້ຮັບການປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ໃຫ້ຖືກຕ້ອງ, ສອດຄ່ອງ ຕາມແຜນຍຸດທະສາດປ້ອງກັນຊາດ ແລະ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ແນໃສ່ຮັບປະກັນ ຄວາມໝັ້ນຄົງຂອງຊາດ, ສ້າງເງື່ອນໄຂໃຫ້ການພັດທະນາເສດຖະກິດ-ສັງຄົມ ຕິດພັນກັບວຽກງານປ້ອງກັນຊາດ ປະກອບສ່ວນເຂົ້າໃນພາລະກິດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ.

**ມາດຕາ 2 ເຂດຍຸດທະສາດປ້ອງກັນຊາດ**

ເຂດຍຸດທະສາດປ້ອງກັນຊາດ ແມ່ນ ຂອບເຂດພື້ນທີ່ພູມມີປະເທດທໍາມະຊາດ ທີ່ມີຄວາມສໍາຄັນຕໍ່ວຽກງານປ້ອງກັນຊາດ, ມີເງື່ອນໄຂນໍາໃຊ້ ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ ປົກປັກຮັກສາປະເທດ

ຊາດ ຊຶ່ງປະກອບດ້ວຍ ໜ້າດິນ, ເທິງໜ້າດິນ, ພື້ນດິນ, ນ່ານນ້ຳ, ພື້ນນ້ຳ, ນ່ານຟ້າ, ຫາດ, ດອນ ລວມທັງ ພູຜາ, ປ່າໄມ້ ໂດຍແມ່ນ ກະຊວງປ້ອງກັນປະເທດ ເປັນຜູ້ກຳນົດ.

**ມາດຕາ 3 ນະໂຍບາຍຂອງລັດກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ**

ລັດ ໃຫ້ບຸລິມະສິດ ໃນການກຳນົດເຂດຍຸດທະສາດປ້ອງກັນຊາດ ເປັນພື້ນທີ່ສຳຄັນຮັບໃຊ້ໃຫ້ແກ່ວຽກງານປ້ອງກັນຊາດ ໂດຍມອບໃຫ້ ກະຊວງປ້ອງກັນປະເທດ ເປັນໃຈກາງ ກຳນົດ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຮ່ວມກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຮັບປະກັນຄວາມໝັ້ນຄົງຂອງຊາດ.

ລັດ ຖືສຳຄັນວຽກງານເຂດຍຸດທະສາດປ້ອງກັນຊາດ ດ້ວຍການສະໜອງ ງົບປະມານ, ວັດຖຸປະກອນ, ອາວຸດຍຸດໂທປະກອນ, ພາຫະນະເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ ແລະ ອື່ນໆ ເພື່ອຮັບປະກັນ ການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານປ້ອງກັນຊາດ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ**

ການດຳເນີນວຽກງານເຂດຍຸດທະສາດປ້ອງກັນຊາດ ໃຫ້ປະຕິບັດ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນຍຸດທະສາດປ້ອງກັນຊາດ ໃນແຕ່ລະໄລຍະ;
2. ຮັບປະກັນ ຄວາມໝັ້ນຄົງຂອງຊາດ ແລະ ຄວາມລັບທາງການທະຫານ;
3. ຮັບປະກັນໃນການສ້າງ ປັດໄຈ ແລະ ເງື່ອນໄຂຮອບດ້ານ ຂອງການສ້າງທ່າສະໜາມປ້ອງກັນຊາດ;
4. ສອດຄ່ອງກັບ ປົດຮຽນ ປະສົບການ, ມູນເຊື້ອດຳເນີນສົງຄາມຕໍ່ສູ້ປົດປ່ອຍຊາດ ແລະ ປົກປັກຮັກສາປະເທດຊາດຂອງກອງທັບ ແລະ ປະຊາຊົນລາວບັນດາເຜົ່າ ແຕ່ລະຍຸກ ແຕ່ລະສະໄໝ;
5. ສອດຄ່ອງກັບຫຼັກການ ການຄາດຄະເນສະພາບການ ທີ່ອາດຈະເກີດຂຶ້ນໃນອະນາຄົດ.

**ມາດຕາ 5 ພັນທະໃນການປົກປັກຮັກສາເຂດຍຸດທະສາດປ້ອງກັນຊາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະ ໃນການປົກປັກຮັກສາເຂດຍຸດທະສາດປ້ອງກັນຊາດ ລວມທັງ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ບໍ່ໃຫ້ເສື່ອມໂຊມ, ສະກັດກັ້ນ ແລະ ຕ້ານການທຳລາຍເຂດຍຸດທະສາດປ້ອງກັນຊາດ ທຸກຮູບແບບ.

**ມາດຕາ 6 ຂອບເຂດການນຳໃຊ້**

ລັດຖະບັນຍັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານເຂດຍຸດທະສາດປ້ອງກັນຊາດ ຢູ່ ສປປ ລາວ.

## ໝວດທີ 2
## ເຂດຍຸດທະສາດປ້ອງກັນຊາດ

**ມາດຕາ 7 ເຂດຍຸດທະສາດປ້ອງກັນຊາດ**

ເຂດຍຸດທະສາດປ້ອງກັນຊາດ ໄດ້ແບ່ງອອກເປັນ ສາມເຂດ ດັ່ງນີ້:

1. ເຂດຍຸດທະສາດແນວຫຼັງ;
2. ເຂດຍຸດທະສາດລຽບຊາຍແດນ;
3. ເຂດຍຸດທະສາດການທະຫານ.

**ມາດຕາ 8 ເຂດຍຸດທະສາດແນວຫຼັງ**

ເຂດຍຸດທະສາດແນວຫຼັງ ແມ່ນ ຂອບເຂດພື້ນທີ່ ຢູ່ບັນດາ ເມືອງ, ແຂວງ ທີ່ໄດ້ກຳນົດເປັນເຂດທີ່ໝັ້ນແນວຫຼັງທີ່ ແໜ້ນແກ່ນ, ເຂັ້ມແຂງຮອບດ້ານ; ເປັນບ່ອນອີງທີ່ແຂງແກ່ນ ເພື່ອດຳເນີນສົງຄາມປົກປັກຮັກສາປະເທດຊາດ ຊຶ່ງແບ່ງອອກເປັນ ເຂດຍຸດທະສາດແນວຫຼັງສູນກາງ ແລະ ເຂດຍຸດທະສາດແນວຫຼັງທ້ອງຖິ່ນ.

ເຂດຍຸດທະສາດແນວຫຼັງສູນກາງ ປະກອບດ້ວຍ:

1. ແຂວງຜົ້ງສາລີ;
2. ແຂວງຫົວພັນ;
3. ແຂວງຫຼວງພະບາງ;
4. ແຂວງຊຽງຂວາງ;
5. ແຂວງໄຊສົມບູນ;
6. ແຂວງວຽງຈັນ;
7. ແຂວງບໍລິຄຳໄຊ;
8. ແຂວງສະຫວັນນະເຂດ;
9. ແຂວງຈຳປາສັກ;
10. ແຂວງເຊກອງ;
11. ແຂວງອັດຕະປື.

ເຂດຍຸດທະສາດແນວຫຼັງທ້ອງຖິ່ນ ປະກອບດ້ວຍ:

1. ແຂວງຜົ້ງສາລີ: ເມືອງສຳພັນ, ເມືອງໃໝ່, ເມືອງຍອດອູ, ເມືອງຜົ້ງສາລີ;
2. ແຂວງຫຼວງນ້ຳທາ: ເມືອງສິງ, ເມືອງວຽງພູຄາ, ເມືອງນາແລ, ເມືອງຫຼວງນ້ຳທາ;
3. ແຂວງບໍ່ແກ້ວ: ເມືອງເມິງ, ເມືອງຫ້ວຍຊາຍ, ເມືອງຜາອຸດົມ;
4. ແຂວງອຸດົມໄຊ: ເມືອງຫຼາ, ເມືອງຮຸນ, ເມືອງໄຊ;
5. ແຂວງຫຼວງພະບາງ: ເມືອງນ້ຳບາກ, ເມືອງວຽງຄຳ, ເມືອງໂພນທອງ, ເມືອງປາກແຊງ, ເມືອງ ພູຄູນ;
6. ແຂວງຫົວພັນ: ເມືອງສົບເບົາ, ເມືອງຊຽງຄໍ້, ເມືອງຮ້ຽມ, ເມືອງຊ່ອນ, ເມືອງຫົວເມືອງ, ເມືອງຊຳເໜືອ, ເມືອງວຽງໄຊ, ເມືອງຊຳໃຕ້, ເມືອງກວັນ, ເມືອງແອດ;
7. ແຂວງຊຽງຂວາງ: ເມືອງພູກູດ, ເມືອງແປກ, ເມືອງຄຳ, ເມືອງໜອກ, ເມືອງໜອງແຮດ, ເມືອງຜາໄຊ;
8. ແຂວງໄຊຍະບູລີ: ເມືອງທົ່ງສາ, ເມືອງປາກລາຍ, ເມືອງພຽງ, ເມືອງໄຊຍະບູລີ;
9. ແຂວງໄຊສົມບູນ: ເມືອງອະນຸວົງ, ເມືອງລ້ອງແຈ້ງ, ເມືອງລ້ອງຊານ, ເມືອງຮົ່ມ, ເມືອງທ່າໂທມ;
10. ແຂວງວຽງຈັນ: ເມືອງທຸລະຄົມ, ເມືອງແກ້ວອຸດົມ, ເມືອງຫີນເຫີບ, ເມືອງເຟືອງ, ເມືອງແມດ, ເມືອງວັງວຽງ, ເມືອງກາສີ;
11. ນະຄອນຫຼວງວຽງຈັນ: ເມືອງໄຊທານີ, ເມືອງປາກງື່ມ, ເມືອງນາຊາຍທອງ, ເມືອງສັງທອງ;
12. ແຂວງບໍລິຄຳໄຊ: ເມືອງບໍລິຄັນ, ເມືອງວຽງທອງ, ເມືອງຄຳເກີດ, ເມືອງໄຊຈຳພອນ;
13. ແຂວງຄຳມ່ວນ: ເມືອງຄູນຄຳ, ເມືອງນາກາຍ, ເມືອງຍົມມະລາດ, ເມືອງບົວລະພາ, ເມືອງມະຫາໄຊ, ເມືອງໄຊບົວທອງ;
14. ແຂວງສະຫວັນນະເຂດ: ເມືອງພິນ, ເມືອງວິລະບູລີ, ເມືອງເຊໂປນ, ເມືອງນອງ, ເມືອງ ທ່າປາງທອງ;
15. ແຂວງສາລະວັນ: ເມືອງຕະໂອ້ຍ, ເມືອງສະໝ້ອຍ;
16. ແຂວງເຊກອງ: ເມືອງກະລືມ, ເມືອງດາກຈຶງ;
17. ແຂວງຈຳປາສັກ: ເມືອງປະທຸມພອນ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ;
18. ແຂວງອັດຕະປື: ເມືອງຊານໄຊ, ເມືອງພູວົງ.

**ມາດຕາ 9 ເຂດຍຸດທະສາດລຽບຊາຍແດນ**

ເຂດຍຸດທະສາດລຽບຊາຍແດນ ແມ່ນ ຂອບເຂດພື້ນທີ່ຢູ່ລຽບຊາຍແດນແຫ່ງຊາດ ຊຶ່ງກຳນົດແຕ່ເສັ້ນຊາຍແດນແຫ່ງຊາດ ເລິກເຂົ້າມາໃນດິນແດນ ຂອງ ສປປ ລາວ ສິບຫ້າກິໂລແມັດ.

**ມາດຕາ 10 ເຂດຍຸດທະສາດການທະຫານ**

ເຂດຍຸດທະສາດການທະຫານ ແມ່ນ ຂອບເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນວຽກງານການທະຫານສະເພາະ ຊຶ່ງລວມມີ ເຂດຍຸດທະສາດການທະຫານທີ່ເປີດເຜີຍໄດ້ ແລະ ບໍ່ສາມາດເປີດເຜີຍໄດ້.

ເຂດຍຸດທະສາດການທະຫານທີ່ເປີດເຜີຍໄດ້ ປະກອບດ້ວຍ ພື້ນທີ່ຄ້າຍກົມກອງທະຫານ, ສະໜາມຫັດແອບ, ໂຮງຮຽນ, ໂຮງໝໍ, ໂຮງງານ, ສາງ, ທ່າເຮືອການທະຫານ, ເດີ່ນບິນການທະຫານ, ສະໜາມບິນ ຫຼື ເດີ່ນບິນພົນລະເຮືອນຢູ່ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແລະ ເຂດອື່ນ ທີ່ກະຊວງປ້ອງກັນປະເທດ ກຳນົດ.

ເຂດຍຸດທະສາດການທະຫານທີ່ບໍ່ສາມາດເປີດເຜີຍໄດ້ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 3
## ການສຳຫຼວດ ແລະ ຂຶ້ນບັນຊີ, ການປົກປັກຮັກສາ, ການພັດທະນາ, ການຟື້ນຟູ ແລະ ກວດກາ ເຂດຍຸດທະສາດປ້ອງກັນຊາດ

**ມາດຕາ 11 ການສຳຫຼວດ ແລະ ຂຶ້ນບັນຊີ ເຂດຍຸດທະສາດປ້ອງກັນຊາດ**

ການສຳຫຼວດ ແມ່ນ ການເກັບກຳ ແລະ ວິເຄາະ ຂໍ້ມູນຕົວຈິງ ກ່ຽວກັບ ພື້ນທີ່, ທີ່ຕັ້ງຂອງພູມມີປະເທດ ເພື່ອວາງແຜນ ກຳນົດ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ເຂດຍຸດທະສາດປ້ອງກັນຊາດ.

ການຂຶ້ນບັນຊີ ແມ່ນ ການບັນທຶກ, ຈັດລຽງຄວາມສຳຄັນຂອງພື້ນທີ່ພູມມີປະເທດ ໃນເຂດຍຸດທະສາດປ້ອງກັນຊາດ ເພື່ອສ້າງຕົວແບບຈຳລອງເຂດຍຸດທະສາດປ້ອງກັນຊາດ.

ກະຊວງປ້ອງກັນປະເທດ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ແລະ ຂຶ້ນບັນຊີເຂດຍຸດທະສາດປ້ອງກັນຊາດ ໃນທົ່ວປະເທດ.

**ມາດຕາ 12 ການປົກປັກຮັກສາເຂດຍຸດທະສາດປ້ອງກັນຊາດ**

ການປົກປັກຮັກສາເຂດຍຸດທະສາດປ້ອງກັນຊາດ ແມ່ນ ການປ້ອງກັນບໍ່ໃຫ້ມີການ ບຸກລຸກ ແລະ ທຳລາຍເຂດຍຸດທະສາດປ້ອງກັນຊາດ ດ້ວຍການ ຄົ້ນຄວ້າວາງແຜນ, ກຳນົດພື້ນທີ່, ກຳນົດວິທີການ ແລະ ມາດຕະການປົກປັກຮັກສາ ແລະ ເກືອດຫ້າມ.

ກະຊວງປ້ອງກັນປະເທດ, ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ, ກອງບັນຊາການທະຫານເມືອງ, ນະຄອນ ເປັນເຈົ້າການປົກປັກຮັກສາເຂດຍຸດທະສາດປ້ອງກັນຊາດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ປຶກສາຫາລື, ສ້າງຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

**ມາດຕາ 13 ການພັດທະນາເຂດຍຸດທະສາດປ້ອງກັນຊາດ**

ການພັດທະນາເຂດຍຸດທະສາດປ້ອງກັນຊາດ ແມ່ນ ການກໍ່ສ້າງໂຄງລ່າງພື້ນຖານ ມີການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ ໃຫ້ເປັນລະບົບຄົບຊຸດ ໃນຍາມສັນຕິພາບ ເພື່ອເປັນພື້ນຖານທີ່ໜັກແໜ້ນ, ເຂັ້ມແຂງ ແກ່ວຽກງານປ້ອງກັນຊາດ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ.

ກະຊວງປ້ອງກັນປະເທດ ເປັນຜູ້ສ້າງແຜນການພັດທະນາເຂດຍຸດທະສາດປ້ອງກັນຊາດ ໂດຍປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 14 ການຟື້ນຟູເຂດຍຸດທະສາດປ້ອງກັນຊາດ**

ການຟື້ນຟູເຂດຍຸດທະສາດປ້ອງກັນຊາດ ແມ່ນ ການບູລະນະສ້ອມແປງ, ກໍ່ສ້າງ ໂຄງລ່າງພື້ນຖານ ທີ່ໄດ້ຮັບຜົນກະທົບ ຫຼື ໄດ້ຮັບຄວາມເສຍຫາຍ, ສິ່ງທີ່ຖືກທຳລາຍ ຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ໃຫ້ຄືນສູ່ສະພາບເດີມ ຫຼື ດີກວ່າເກົ່າ.

ການຟື້ນຟູເຂດຍຸດທະສາດປ້ອງກັນຊາດ ທີ່ໄດ້ຮັບຄວາມເສຍຫາຍຈາກກິດຈະການ ເຊົ່າ, ສຳປະທານ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ປະຕິບັດ ຕາມ ກົດໝາຍ, ສັນຍາ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 15 ການກວດກາເຂດຍຸດທະສາດປ້ອງກັນຊາດ**

ການກວດກາເຂດຍຸດທະສາດປ້ອງກັນຊາດ ແມ່ນ ການຕິດຕາມ ກວດກາ ທຸກປາກົດການ ແລະ ທຸກການເຄື່ອນໄຫວ ຢູ່ໃນເຂດຍຸດທະສາດປ້ອງກັນຊາດ.

## ໝວດທີ 4
## ການນຳໃຊ້ ເຂດຍຸດທະສາດປ້ອງກັນຊາດ ແລະ ພື້ນທີ່ອື່ນ

**ມາດຕາ 16 ການນຳໃຊ້ ເຂດຍຸດທະສາດປ້ອງກັນຊາດ ແລະ ພື້ນທີ່ອື່ນ**

ລັດ ສະຫງວນພື້ນທີ່ເຂດຍຸດທະສາດປ້ອງກັນຊາດໄວ້ ເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນຊາດ. ໃນກໍລະນີ ມີຄວາມຈຳເປັນຕ້ອງນຳໃຊ້ ເຂດຍຸດທະສາດປ້ອງກັນຊາດ ແລະ ພື້ນທີ່ອື່ນ ທີ່ພົວພັນກັບເຂດຍຸດທະສາດປ້ອງກັນຊາດ ເພື່ອດຳເນີນກິດຈະການອື່ນ ຕ້ອງໄດ້ຮັບການເຫັນດີຈາກກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 17 ການສະເໜີນຳໃຊ້ເຂດຍຸດທະສາດປ້ອງກັນຊາດ ແລະ ພື້ນທີ່ອື່ນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ນຳໃຊ້ເຂດຍຸດທະສາດປ້ອງກັນຊາດ ເພື່ອດຳເນີນກິດຈະການອື່ນ ແລະ ພື້ນທີ່ອື່ນ ທີ່ພົວພັນກັບເຂດຍຸດທະສາດປ້ອງກັນຊາດ ທີ່ອາດປ່ຽນແປງຮູບພູມມີປະເທດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຢູ່ສູນກາງ ໃຫ້ຍື່ນຄຳຮ້ອງ ຕໍ່ກະຊວງທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລ້ວນຳສະເໜີຕໍ່ກະຊວງປ້ອງກັນປະເທດ ພິຈາລະນາຢ່າງລະອຽດ ເມື່ອມີການຕົກລົງເຫັນດີແລ້ວ ຈຶ່ງດຳເນີນຕາມຂັ້ນຕອນຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
2. ຢູ່ທ້ອງຖິ່ນ ໃຫ້ຍື່ນຄຳຮ້ອງ ຕໍ່ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ຄົ້ນຄວ້ານຳສະເໜີຕໍ່ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຕໍ່ກະຊວງປ້ອງກັນປະເທດ ພິຈາລະນາຢ່າງລະອຽດ ເມື່ອມີການຕົກລົງເຫັນດີແລ້ວ ຈຶ່ງດຳເນີນຕາມຂັ້ນຕອນຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 18 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຈັບຈອງ, ບຸກລຸກ, ທຳລາຍ ແລະ ປ່ຽນແປງ ຮູບພູມມີປະເທດໃນເຂດຍຸດທະສາດປ້ອງກັນຊາດ;

2. ດຳເນີນກິດຈະການໃນເຂດຍຸດທະສາດປ້ອງກັນຊາດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ດຳເນີນກິດຈະການບໍ່ຖືກຕ້ອງຕາມເປົ້າໝາຍທີ່ໄດ້ຮັບອະນຸຍາດ;

3. ໃຫ້ ຫຼື ເປັນສື່ກາງ ໃນການໃຫ້ສິນບົນ;

4. ສົມຮູ້ຮ່ວມຄິດກັບ ເຈົ້າໜ້າທີ່, ພະນັກງານທີ່ກ່ຽວຂ້ອງ ເພື່ອຫາຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງ;

5. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ໃສ່ຮ້າຍປ້າຍສີ, ຂັດຂວາງເຈົ້າໜ້າທີ່ ໃນເວລາປະຕິບັດໜ້າທີ່;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 19 ຂໍ້ຫ້າມສຳລັບ ເຈົ້າໜ້າທີ່, ພະນັກງານ ທີ່ກ່ຽວຂ້ອງ

ຫ້າມ ເຈົ້າໜ້າທີ່, ພະນັກງານ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ເປີດເຜີຍຄວາມລັບກ່ຽວກັບເຂດຍຸດທະສາດປ້ອງກັນຊາດ;

3. ທວງເອົາ, ຂໍເອົາ ຫຼື ຮັບເອົາ ສິນບົນ;

4. ກີດໜ່ວງຖ່ວງດຶງ ການ ຄົ້ນຄວ້າ, ພິຈາລະນາເອກະສານ ກ່ຽວກັບເຂດຍຸດທະສາດປ້ອງກັນຊາດ;

5. ອະນຸຍາດໃຫ້ດຳເນີນກິດຈະການໃນເຂດຍຸດທະສາດປ້ອງກັນຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 6
## ການຄຸ້ມຄອງ ແລະ ການກວດກາວຽກງານເຂດຍຸດທະສາດປ້ອງກັນຊາດ

### ມາດຕາ 20 ອົງການຄຸ້ມຄອງວຽກງານເຂດຍຸດທະສາດປ້ອງກັນຊາດ

ລັດຖະບານ ຄຸ້ມຄອງວຽກງານເຂດຍຸດທະສາດປ້ອງກັນຊາດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານເຂດຍຸດທະສາດປ້ອງກັນຊາດ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ;
3. ກອງບັນຊາການທະຫານ ເມືອງ, ນະຄອນ.

### ມາດຕາ 21 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນປະເທດ

ໃນການຄຸ້ມຄອງວຽກງານເຂດຍຸດທະສາດປ້ອງກັນຊາດຂອບເຂດທົ່ວປະເທດ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ ເປັນແຜນການ, ແຜນງານ, ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

4. ຄົ້ນຄວ້າ, ສ້າງ ແຜນການນຳໃຊ້ເຂດຍຸດທະສາດປ້ອງກັນຊາດ;

5. ກຳນົດແຜນສຳຫຼວດ ແລະ ຂຶ້ນບັນຊີ ເຂດຍຸດທະສາດປ້ອງກັນຊາດ;

6. ສ້າງແຜນງົບປະມານນຳໃຊ້ເຂົ້າໃນ ການສຳຫຼວດ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ເພື່ອສະເໜີລັດຖະບານພິຈາລະນາ;

7. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

8. ຊີ້ນຳ ກ່ຽວກັບ ການຄຸ້ມຄອງ, ກວດກາ, ປົກປັກຮັກສາ, ພັດທະນາ, ຟື້ນຟູ ແລະ ນຳໃຊ້ ເຂດຍຸດທະສາດປ້ອງກັນຊາດ;

9. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບການສະເໜີຂໍນຳໃຊ້ ເຂດຍຸດທະສາດປ້ອງກັນຊາດ ແລະ ພື້ນທີ່ອື່ນທີ່ພົວພັນເຖິງເຂດຍຸດທະສາດປ້ອງກັນຊາດ;

10. ສ້າງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ຖານຂໍ້ມູນເຂດຍຸດທະສາດປ້ອງກັນຊາດ;

11. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

12. ສະເໜີອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ ໃນກໍລະນີທີ່ພົບເຫັນການລະເມີດກົດໝາຍ;

13. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂດຍຸດທະສາດປ້ອງກັນຊາດຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງກອງບັນຊາການທະຫານ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງເຂດຍຸດທະສາດປ້ອງກັນຊາດ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

3. ຄົ້ນຄວ້າ, ສ້າງ ແຜນການນຳໃຊ້ເຂດຍຸດທະສາດປ້ອງກັນຊາດ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

5. ຊີ້ນຳ ກ່ຽວກັບການຄຸ້ມຄອງ, ກວດກາ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ເຂດຍຸດທະສາດປ້ອງກັນຊາດ;

6. ສ້າງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ຖານຂໍ້ມູນເຂດຍຸດທະສາດປ້ອງກັນຊາດ;

7. ສຳເນົາຖານຂໍ້ມູນກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

8. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

9. ສະເໜີອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ ໃນກໍລະນີທີ່ພົບເຫັນການລະເມີດກົດໝາຍ;

10. ປະສານສົມທົບກັບ ພະແນກ, ອົງການ, ຄະນະກຳມະການປົກຄອງເມືອງ, ນະຄອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານເຂດຍຸດທະສາດປ້ອງກັນຊາດ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂດຍຸດທະສາດປ້ອງກັນຊາດ ໃຫ້ກະຊວງປ້ອງກັນປະເທດ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງກອງບັນຊາການທະຫານ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານເຂດຍຸດທະສາດປ້ອງກັນຊາດ ກອງບັນຊາການທະຫານ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ກ່ຽວກັບເຂດຍຸດທະສາດປ້ອງກັນຊາດ;
2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ລະບຽບການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;
3. ຄົ້ນຄວ້າ, ສ້າງ ແຜນການນຳໃຊ້ເຂດຍຸດທະສາດປ້ອງກັນຊາດ;
4. ຄົ້ນຄວ້າສ້າງ ແລະ ພັດທະນາ ຖານຂໍ້ມູນວຽກງານເຂດຍຸດທະສາດປ້ອງກັນຊາດ;
5. ສຳເນົາຖານຂໍ້ມູນກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;
6. ສະເໜີອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ ໃນກໍລະນີທີ່ພົບເຫັນການລະເມີດກົດໝາຍ;
7. ປະສານສົມທົບກັບ ຫ້ອງການ, ອົງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບເຂດຍຸດທະສາດ ປ້ອງກັນຊາດ;
8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂດຍຸດທະສາດປ້ອງກັນຊາດ ໃຫ້ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນ ປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ອົງການຄຸ້ມຄອງວຽກງານເຂດຍຸດທະສາດປ້ອງກັນຊາດ ຕາມພາລະ ບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 25 ອົງການກວດກາວຽກງານເຂດຍຸດທະສາດປ້ອງກັນຊາດ**

ອົງການກວດກາວຽກງານເຂດຍຸດທະສາດປ້ອງກັນຊາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານເຂດຍຸດທະສາດ ປ້ອງກັນຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງລັດຖະບັນຍັດສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງ ມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 26 ເນື້ອໃນກວດກາ**

ການກວດກາວຽກງານເຂດຍຸດທະສາດປ້ອງກັນຊາດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຂດຍຸດທະສາດປ້ອງກັນຊາດ;
2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງ ເຈົ້າໜ້າທີ່, ພະນັກງານ ທີ່ກ່ຽວຂ້ອງກັບວຽກງານ ເຂດຍຸດທະສາດປ້ອງກັນຊາດ;
3. ການປະຕິບັດຂັ້ນຕອນການອະນຸມັດນຳໃຊ້ພື້ນທີ່ ທີ່ພົວພັນກັບເຂດຍຸດທະສາດປ້ອງກັນຊາດ;
4. ການດຳເນີນກິດຈະການໃນເຂດຍຸດທະສາດປ້ອງກັນຊາດ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 27 ຮູບການກວດກາ**

ການກວດກາວຽກງານເຂດຍຸດທະສາດປ້ອງກັນຊາດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຊຶ່ງແມ່ນ ການກວດກາ ນອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການກວດກາວຽກງານເຂດຍຸດທະສາດປ້ອງກັນຊາດ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 7
## ງົບປະມານ

**ມາດຕາ 28 ງົບປະມານ**

ກະຊວງປ້ອງກັນປະເທດ ນໍາໃຊ້ງົບປະມານຂອງລັດຖະບານ ເຂົ້າໃນການເຄື່ອນໄຫວວຽກງານເຂດຍຸດທະສາດປ້ອງກັນຊາດ.

ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ, ເມືອງ, ນະຄອນ ນໍາໃຊ້ງົບປະມານຂອງ ຄະນະກໍາມະການປົກຄອງ ນະຄອນຫຼວງ, ແຂວງ, ເມືອງ, ນະຄອນ ທີ່ໄດ້ຈັດສັນໃນແຕ່ລະປີ ເຂົ້າໃນການເຄື່ອນໄຫວວຽກງານເຂດຍຸດທະສາດປ້ອງກັນຊາດ.

**ມາດຕາ 29 ການຂຶ້ນແຜນ, ຈັດສັນ ແລະ ນໍາໃຊ້ງົບປະມານ**

ການຂຶ້ນແຜນ, ຈັດສັນ ແລະ ນໍາໃຊ້ງົບປະມານເຂົ້າໃນການເຄື່ອນໄຫວວຽກງານເຂດຍຸດທະສາດປ້ອງກັນຊາດ ໃຫ້ປະຕິບັດ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບການທີ່ກ່ຽວຂ້ອງທີ່ກະຊວງການເງິນ ວາງອອກໃນແຕ່ລະໄລຍະ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ ແລະ ໄດ້ປະກອບສ່ວນເຂົ້າໃນວຽກງານເຂດຍຸດທະສາດປ້ອງກັນຊາດ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລັດຖະບັນຍັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 33 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ